ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

ແຂວງຫຼວງນ້ຳທາ

ເຈົ້າແຂວງ

ເລກທີ 01....../ຈຂ

ຫຼວງນ້ຳທາ, ວັນທີ 12.ກໍລະກົດ..2016

# ຄຳສັ່ງ

## ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃນເຂດຊົນລະປະທານ

ເຖິງ: ບັນດາທ່ານ ຫົວໜ້າພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ, ເຈົ້າເມືອງ 5 ເມືອງ ແລະ ຊາວກະສິກອນ ພາຍໃນແຂວງຫຼວງນ້ຳທາຮັບຊາບ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 (ພາກທີII, ໝວດທີIII, ມາດຕາທີ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າກຳແພງນະຄອນ).
- ອີງຕາມ: ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003. (ພາກທີII ການຄຸ້ມຄອງທີ່ດິນກະສິກຳ ແລະ ການຂຶ້ນທະບຽນທີ່ດິນ).
- ອີງຕາມ: ກົດໝາຍວ່າດ້ວຍຊົນລະປະທານ, ເລກທີ 26/ນຍ, ລົງວັນທີ 14 ທັນວາ 2012 (ພາກທີ V ມາດຕາ 52)
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳປະຈຳແຂວງ ແລະ ນະຄອນຫຼວງ ສະບັບເລກທີ 0719/ກປ, ລົງວັນທີ 15 /03 /2013.

ໃນໄລຍະຜ່ານມາ ກໍ່ຄືປະຈຸບັນ ພັກ - ລັດຖະບານ, ອຳນາດການປົກຄອງແຂວງຫຼວງນ້ຳທາ ໄດ້ສຸມທຶນຮອນອັນມະຫາສານ ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນ ການກໍ່ສ້າງ-ສ້ອມແປງລະບົບຊົນລະປະທານ ແນໃສ່ຕອບສະໜອງນ້ຳໃຫ້ແກ່ການຜະລິດກະສິກຳ ເພື່ອສ້າງເງື່ອນໄຂອັນສະດວກ ໃຫ້ແກ່ພໍ່ແມ່ປະຊາຊົນພາຍໃນແຂວງຫຼວງນ້ຳທາ ໃຫ້ສາມາດທຳການຜະລິດກະສິກຳແບບກະເສດສຸມໄດ້ 2 ລະດູ ໃຫ້ສາມາດຄ້ຳປະກັນສະບຽງອາຫານ ແລະ ຂາຍເປັນສິນຄ້າ ເຮັດໃຫ້ປະຊາຊົນມີລາຍຮັບເພີ່ມຂຶ້ນ, ມີຊີວິດການເປັນຢູ່ຂອງປະຊາຊົນ ນັບມື້ດີຂຶ້ນເທື່ອລະກ້າວ ແລະ ເພື່ອຮັກສາເນື້ອທີ່ຜະລິດເຂົ້າໃນລະດູຝົນໃຫ້ໄດ້ 12, 000 ເຮັກຕາ ໃນທົ່ວແຂວງ, ແຕ່ກົງກັນຂ້າມຍັງມີບາງເຂດ ບໍ່ທຳການຜະລິດເຕັມຄວາມສາມາດ ຂອງລະບົບຊົນລະປະທານ ປະປ່ອຍໃຫ້ດິນເປົ່າຫວ່າງ ໂດຍບໍ່ແມ່ນລະດູແລ້ງ ແລະ ບັນຫາການຖົມດິນນາ ເປັນດິນປຸກສ້າງ ຫຼື ຫັນປ່ຽນດິນນາໄປເປັນດິນປະເພດອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ຊຶ່ງເປັນສາຍເຫດເຮັດໃຫ້ເນື້ອທີ່ນາ ຫຼຸດລົງທຸກໆປີ

ເຮັດໃຫ້ການລົງທຶນຂອງລັດຖະບານ ບໍ່ຄຸ້ມຄ່າໃນການລົງທຶນ ແລະ ມີຄວາມສ່ຽງຕໍ່ກັບ ການຄໍ້າປະກັນ ດ້ານສະບຽງອາຫານ ໃນອານາຄົດ, ເພື່ອເຮັດໃຫ້ການຄຸ້ມຄອງ-ນຳໃຊ້ທີ່ດິນກະສິກຳ ມີປະສິດທິຜົນສູງ ແລະ ຍືນຍົງ.

## ເຈົ້າແຂວງຫຼວງນໍ້າທາ ອອກຄຳສັ່ງດັ່ງນີ້:

1. ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ອຳນາດການປົກຄອງເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ສຳຫຼວດເກັບກຳຂໍ້ມູນເນື້ອທີ່ນາ ທີ່ໄດ້ຮັບນໍ້າຊົນລະປະທານ ໃນຂອບເຂດທົ່ວແຂວງເພື່ອກຳນົດເຂດ, ແຕ້ມແຜນທີ່ ແລະ ຂຶ້ນສຳມະໂນທີ່ດິນກະສິກຳ ເພື່ອໃຫ້ສະດວກໃນການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.
2. ຫ້າມບໍ່ໃຫ້ບຸກຄົນ ຫຼື ນິຕິບຸກຄົນຫັນປ່ຽນດິນນາ ໄປເປັນດິນປຸກສ້າງ, ດິນອຸດສະຫະກຳ ແລະ ດິນປະເພດອື່ນໆ ໂດຍເດັດຂາດ, ຖ້າບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ແລະ ຂັ້ນແຂວງ.

- ດິນນາທີ່ຢູ່ຕິດກັບເສັ້ນທາງຫຼວງ, ທາງຊອຍ ຖ້າມີຄວາມຈຳເປັນຫັນປ່ຽນ ເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ, ແຂວງກ່ອນມີການດຳເນີນການປ່ຽນແປງທຸກຢ່າງ, ຂອບເຂດພິຈາລະນາແມ່ນ ຫ່າງຈາກເສັ້ນທາງໄປບໍ່ເກີນ 50 ແມັດ.
- ຖ້າມີບຸກຄົນ ຫຼື ນິຕິບຸກຄົນຫາກລ່ວງລະເມີດ ຫັນປ່ຽນດິນນາ ໄປເປັນດິນປະເພດອື່ນ, ໃຫ້ພາກສ່ວນທີ່ກ່ຽວຂ້ອງລົງກວດກາເບິ່ງຕົວຈິງ ພ້ອມທັງນຳເອົາຜູ້ລະເມີດ ມາສຶກສາອົບຮົມ ຕາມກຳລະນີໜັກ ຫຼື ເບົາ ແລ້ວແນະນຳໃຫ້ເຈົ້າຂອງດິນດັ່ງກ່າວ ບຸກເບີກເປັນນາຄືນ ຫຼື ເສຍຄ່າທຳນຽມການຫັນປ່ຽນດິນດັ່ງກ່າວ ຕາມລະບຽບ, ກົດໝາຍ ພ້ອມທັງປັບໃໝ ຕາມຄວາມເໝາະສົມ.

3. ການຜະລິດກະສິກຳໃນເຂດຮັບນໍ້າຊົນລະປະທານ ໃນລະດູຝົນຕົ້ນຕໍແມ່ນສຸມໃສ່ຜະລິດເຂົ້າ ເຮັດແບບກະເສດສຸມ, ນຳໃຊ້ເຕັກນິກໃໝ່, ໃຊ້ແນວພັນປັບປຸງ ຫຼື ພື້ນເມືອງ ທີ່ມີອາຍຸສັ້ນ-ກາງ (ແຕ່ລະໂຄງການນາໃຊ້ 1 ຫາ 2 ແນວພັນ), ສ່ວນລະດູແລ້ງ ບ່ອນທີ່ມີນໍ້າສະດວກ ຕ້ອງປູກເຂົ້າ ແລະ ປູກພືດທີ່ຕະຫຼາດຕ້ອງການ ໝາຍຄວາມວ່າຊາວກະສິກອນຕ້ອງຜະລິດ ເຕັມຄວາມອາດສາມາດ ຂອງການສະໜອງນໍ້າແຕ່ລະຊົນລະປະທານ.
4. ໃຫ້ຂະແໜງການທີ່ກ່ຽວຂ້ອງສຳຫຼວດ, ວິໄຈ ຄວາມອຸດົມສົມບູນຂອງທາດອາຫານໃນດິນ, ເພື່ອເປັນຂໍ້ມູນໃຫ້ແກ່ຊາວກະສິກອນ ໃນການປັບປຸງບຳລຸງດິນນາຂອງຕົນໃຫ້ຖືກຕ້ອງ ຕາມຫຼັກວິຊາການ ເພື່ອຍົກສະມັດຕະພາບຂອງການຜະລິດໃຫ້ສູງຂຶ້ນ ແລະ ປະຫຍັດຕົ້ນທຶນການຜະລິດ.
5. ກຳນົດ ເຂດສະຫງວນຂອງຄອງເໝືອງ ແມ່ນແທກຫ່າງຈາກໃຈກາງຄອງເໝືອງ ທີ່ມີຢູ່ແລ້ວ ອອກໄປເບື້ອງລະ 5 ແມັດ, ຫົວງານແມ່ນແທກຈາກຝາປິດ ອອກໄປເບື້ອງລະ 20 ແມັດ, ຫ້າມປູກຕົ້ນໄມ້ໃຫຍ່, ປຸກສ້າງຕ່າງໆ ໃສ່ເຂດສະຫງວນ ແລະ ເພື່ອສະດວກໃນການກໍ່ສ້າງ-ສ້ອມແປງລະບົບຄອງເໝືອງ, ຫົວງານ ແລະ ຖ້າມີການວັດແທກອອກໃບຕາດິນຖາວອນ ດິນປະເພດຕ່າງໆ ຕິດກັບເຂດສະຫງວນຊົນລະປະທານ ຫ້າມວັດແທກເຂົ້າມາເຂດສະຫງວນດັ່ງກ່າວ.
6. ມອບໃຫ້ອຳນາດການປົກຄອງເມືອງ ຊີ້ນຳຫ້ອງການທີ່ກ່ຽວຂ້ອງຂອງເມືອງ, ປະຊາຊົນ ພ້ອມກັນເອົາໃຈໃສ່ປົກປັກຮັກສາປ່າປ້ອງກັນແຫຼ່ງນໍ້າ ແລະ ປ່າໃນເຂດອ່າງໂຕ່ງຊົນລະປະທານ, ບໍ່ອະນຸຍາດໃຫ້ບຸກລຸກຖາງປ່າເຮັດໄຮ່, ເຮັດ

ສວນ ແລະ ການຂຸດຄົ້ນໄມ້, ພ້ອມທັງຫ້າມສີດຢາຂ້າຫຍ້າໃນເຂດອ່າງໂຕ່ງນ້ຳ, ຖ້າມີຜູ້ລະເມີດໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

7. ທຸກພາກສ່ວນຈົ່ງຮັບຮູ້ ພ້ອມກັນຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ ແລະ ໃຫ້ໄດ້ຮັບຜົນດີ, ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດ ລາຍງານໃຫ້ຂັ້ນເທິງຮັບຊາບປົກກະຕິ.

8. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ 15 ວັນ ຫຼັງຈາກລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງຫຼວງນ້ຳທາ

ເພັດທາວອນ ພິລະວັນ